ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

pwc

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2024



www.pwc.com/la

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ ທີ່ບທອນຄືນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານຖານະການເງິນ	1
ໃບລາຍງາຍຖານະການເງິນ	2 - 3
ໃບລາຍງານຜົນໄດ້ຮັບ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6 - 7
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້	8 - 20

ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ພວກເຮົາ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ. ເຊິ່ງປະກອບມີໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2024, ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ ຫົກ ເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້, ຜູ້ບໍລິຫານ ຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ 2 ໃນເອກະສານລາຍງານການເງິນ. ຄວາມຮັບຜິດຊອບຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້ ດັ່ງກ່າວບົນພື້ນຖານຜົນຂອງການທົບທວນຄືນຂອງພວກເຮົາ.

ຂອບເຂດການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນຕາມມາດຕະຖານການທົບທວນຄືນສາກົນ 2410, "ການທົບທວນຄືນເອກະສານລາຍງານການເງິນ ໂດຍຜູ້ກວດສອບອິດສະຫຼະ" ການທົບທວນຄືນນີ້ປະກອບໂດຍການໃຊ້ວິທີການສອບຖາມ ໂດຍສ່ວນໃຫຍ່ແມ່ນບຸກຄົນທີ່ຮັບຜິດຊອບ ດ້ານການເງິນ ແລະ ການບັນຊີ ແລະ ໃຊ້ວິທີວິເຄາະ ແລະ ຂັ້ນຕອນການທົບທວນຄືນອື່ນໆ, ການທົບທວນຄືນມີຂອບເຂດຈຳກັດກວ່າການກວດສອບ ຕາມມາດຕະຖານການກວດສອບສາກົນ ເພາະສະນັ້ນ ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້ ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມຄິດເຫັນໃນການກວດສອບ ທົບທວນຄືນ.

ການສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກເຮົາແມ່ນບໍ່ມີຫຍັງທີ່ສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ຂໍ້ມູນທາງການເງິນ ດັ່ງກ່າວ ບໍ່ສະໜອງຂໍ້ມູນທີ່ຖືກຕ້ອງ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ

ໂດຍ: ທ່ານ ພົງພັນ ດຳຣົງພັນອຸດົມ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 5 ກັນຍາ 2024

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	9,965,415,176	4,812,188,424
ໜີ້ຕ້ອງຮັບທາງການຄ້າ-ສຸດທິ	5	26,776,202,328	24,176,310,558
ສິນຄ້າໃນສາງ-ສຸດທິ	6	764,870,700	800,980,532
ເງິນກູ້ຍືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	21.5	153,921,094,595	145,733,311,964
ຊັບສິນໝຸນວຽນອື່ນໆ	7	545,394,913,466	491,927,151,491
ລວມຊັບສິນໝຸນວຽນທັງໝົດ		**736,822,496,265**	**667,449,942,969**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຖິ້ງທີ່ມີຕົວຕົນ-ສຸດທິ	8	371,713,120,793	371,951,926,724
ຊັບສົມບັດຖິ້ງທີ່ບໍ່ມີຕົວຕົນ-ສຸດທິ	9	1,746,632,693	2,083,635,172
ຊັບສົມບັດຖິ້ງທີ່ເພື່ອການລົງທຶນ-ສຸດທິ	10	199,111,653,007	199,477,136,681
ການລົງທຶນໃນບໍລິສັດໃນເຄືອ	11	198,000,000,000	198,000,000,000
ຊັບສິນບໍ່ໝຸນວຽນອື່ນໆ	12	50,647,216,123	45,304,018,757
ລວມຊັບສິນບໍ່ໝຸນວຽນທັງໝົດ		**821,218,622,616**	**816,816,717,334**
ລວມຊັບສິນທັງໝົດ		**1,558,041,118,881**	**1,484,266,660,303**

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	13	10,263,736,280	6,770,227,722
ໜີ້ຕ້ອງສົ່ງອາກອນ	14	921,056,081	7,025,103,861
ເງິນກູ້ຢືມໄລຍະສັ້ນ	15	357,090,676,404	293,799,915,008
ໜີ້ສິນໝຸນວຽນອື່ນໆ	16	307,011,135,633	244,650,352,617
ລວມໜີ້ສິນໝຸນວຽນທັງໝົດ		**675,286,604,398**	**552,245,599,208**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	15	489,357,276,316	514,855,649,756
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**489,357,276,316**	**514,855,649,756**
ລວມໜີ້ສິນທັງໝົດ		**1,164,643,880,714**	**1,067,101,248,964**
ທຶນ			
ທຶນຈົດທະບຽນ	17	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	17	27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		313,029,203,069	313,029,203,069
ກຳໄລ/(ຂາດທຶນ) ສະສົມ			
ຈັດສັນ - ຄັງແຮຕາມລະບຽບການ	18	3,708,530,711	3,708,530,711
ຄັງແຮອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍຖ້າແບ່ງປັນ		(422,956,695,932)	(399,188,522,760)
ລວມທຶນທັງໝົດ		**393,397,238,167**	**417,165,411,339**
ລວມໜີ້ສິນ ແລະ ທຶນທັງໝົດ		**1,558,041,118,881**	**1,484,266,660,303**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 20 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

ໃບລາຍງານຖານະການເງິນ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ລາຍຮັບ		1,138,101,095	995,228,165
ຕົ້ນທຶນຂາຍ		(47,404,105)	(37,029,756)
ກຳໄລເບື້ອງຕົ້ນ		**1,090,696,990**	**958,198,409**
ລາຍຮັບອື່ນໆ		18,038,447,586	28,468,837,643
ຂາດທຶນຈາກອັດຕາແລກປ່ຽນ		(1,664,267,277)	(629,913,261)
ລາຍຈ່າຍໃນການຂາຍ		(1,309,366)	(17,400,000)
ລາຍຈ່າຍບໍລິຫານ		(12,850,375,072)	(12,587,112,581)
ກຳໄລຈາກການດຳເນີນງານ		**4,613,192,861**	**16,192,610,210**
ລາຍຈ່າຍທາງການເງິນ		(28,381,366,033)	(33,326,355,702)
ຂາດທຶນ ສຸດທິກ່ອນຫັກອາກອນ		**(23,768,173,172)**	**(17,133,745,492)**
ອາກອນກຳໄລ	19	-	-
ຂາດທຶນ ສຸດທິສຳລັບໄລຍະ		**(23,768,173,172)**	**(17,133,745,492)**
ຂາດທຶນ ຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	20	(101)	(73)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company
ນະຄອນ ຫຼວງ ວຽງຈັນ

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ໃບລາຍງານສ່ວນປ່ຽນແປງຂອງທຶນ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທຶນຈົດທະບຽນ ທີ່ຖອກແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສ່ວນເພີ່ມຈາກການ ຕີມູນຄ່າ ກີບ	ກຳໄລ/(ຂາດທຶນ) ສະສົມ ຄ້າງແຮຕາມ ລະບຽບການ ກີບ	ກຳໄລ/(ຂາດທຶນ) ສະສົມ ຄ້າງແຮອື່ນໆ ກີບ	ກຳໄລ/(ຂາດທຶນ) ສະສົມ ຂາດທຶນສະສົມ ລໍ້ຖ້າແຍ່ງປັນ ກີບ	ລວມ ກີບ
ຍອດຍົກມາໃນວັນທີ 1 ມັງກອນ 2023 - ກ່ອນສອບ	17,18	**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
ຂາດທຶນສຸດທິສຳລັບໄລຍະ		-	-	-	-	-	(17,133,745,492)	(17,133,745,492)
ຍອດເໜືອໃນວັນທີ 30 ມິຖຸນາ 2023 - ທີ່ບທວນຄືນ		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(373,957,023,326)**	**442,396,910,773**
ຍອດຍົກມາໃນວັນທີ 1 ມັງກອນ 2024 - ກ່ອນສອບ	17,18	**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(399,188,522,760)**	**417,165,411,339**
ຂາດທຶນສຸດທິສຳລັບໄລຍະ		-	-	-	-	-	(23,768,173,172)	(23,768,173,172)
ຍອດເໜືອໃນວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(422,956,695,932)**	**393,397,238,167**

ທ່ານ ທ້າວ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 20 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທີ່ບທວນຄືນ ໂດຍຫຍໍ້

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2024

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ຂາດທຶນສຸດທິກ່ອນຫັກອາກອນກຳໄລສຳລັບໄລຍະ		(23,768,173,172)	(17,133,745,492)
ປັບປຸງເພື່ອສົມທຽບຂາດທຶນສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	8,9,10	1,602,125,797	2,636,453,216
ຫັກຄືນຄັງແຮຄ່າເສື່ອມໜີ້ສົງໄສຈະເສຍ		(31,429,000)	(119,583,728)
ລາຍຮັບດອກເບ້ຍ		(778,697,374)	(5,175,728,129)
ລາຍຈ່າຍດອກເບ້ຍ		28,381,366,033	33,326,355,702
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ເງິນທຶນໝຸນວຽນ		**5,405,192,284**	**13,533,751,569**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		(2,599,891,770)	(1,046,710,815)
ສິນຄ້າໃນສາງ		36,109,832	(331,599,962)
ໜີ້ຕ້ອງສົ່ງທາງການຄ້າ		3,170,240,086	1,140,060,680
ໜີ້ຕ້ອງສົ່ງອາກອນ		(6,104,047,780)	2,967,859,232
ຊັບສິນໝຸນວຽນອື່ນໆ		(52,669,186,568)	(131,137,032,510)
ຊັບສິນບໍ່ໝຸນວຽນອື່ນໆ		(5,343,197,366)	(773,462,090)
ໜີ້ສິນອື່ນໆ		70,700,497,446	118,919,393,616
ເງິນສົດທີ່ເກີດຂຶ້ນຈາກການດຳເນີນງານ		**12,595,716,164**	**3,272,259,720**
ດອກເບ້ຍທີ່ໄດ້ຮັບ		-	625,190,333
ດອກເບ້ຍທີ່ໄດ້ຈ່າຍ		(6,866,248,755)	(3,119,004,911)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**5,729,467,409**	**778,445,142**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນບັດຄົງທີ່	8,9	(660,833,713)	(1,369,866,374)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(660,833,713)**	**(1,369,866,374)**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2024

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ກະແສເງິນສົດຈາກ ກິດຈະກຳການເງິນ			
ຮັບເງິນຈາກການກູ້ຢືມ	15	-	66,697,256,733
ຊຳລະເງິນກູ້ຢືມ	15	-	(66,324,000,000)
ເງິນສົດສຸດທິ ຈາກກິດຈະກຳການເງິນ		-	**373,256,733**
ເພີ່ມຂຶ້ນ/ (ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**5,068,633,696**	**(218,164,499)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນໄລຍະ	4	4,812,188,424	5,494,674,970
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		84,593,056	59,177,744
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ		**9,965,415,176**	**5,335,688,215**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ບັນຊີໜີ້ຕ້ອງສົ່ງ ສຳລັບຊັບສິນຄົງທີ່		-	72,398,103

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການໃຫຍ່

ວັນທີ: 5 ກັນຍາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 5 ກັນຍາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 20 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ ທົບທວນຄືນ ໂດຍຫຍໍ້

1 ຂໍ້ມູນທົ່ວໄປ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ ບໍລິສັດ) ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດທີ່ດຳເນີນທຸລະກິດ ແລະ ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງ ວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ລົງທຶນ 99% ໃນບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປິໂຕຣເທຣດ ຄີສທະບ໊ອຊັນ ຈຳກັດ ຕາມລຳດັບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເປັນບໍລິສັດຖືຮຸ້ນ ແລະ ໃຫ້ບໍລິການບັດເຕີມນ້ຳມັນ (ບັດພລັສກາດ).

ເອກະສານລາຍງານການເງິນ ທີ່ບທວນຄືນ ສະບັບນີ້ ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນ ວັນທີ 5 ກັນຍາ 2024.

2 ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023, ຍົກເວັ້ນການຮັບຮອງເອົາການປັບປຸງໃນນະໂຍບາຍການ ບັນຊີໃນບົດອະທິບາຍຂໍ້ 5 ໃນເອກະສານລາຍງານການເງິນທີ່ບທວນຄືນ. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍ ງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບ ແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ ໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳ ນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນ ສະບັບນີ້ ຄວນອ່ານຄຸ່ກັບບົດລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023.

3 ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ທີ່ບທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ ການຄາດຄະເນ ແລະ ການສົມມຸດ ຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງ ໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານການເງິນ ທີ່ບທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງ ບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານລາຍງານ ການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023, ຍົກເວັ້ນການຮັບຮອງເອົາການປັບປຸງໃນນະໂຍບາຍການບັນຊີໃນບົດອະທິບາຍຂໍ້ 5 ໃນເອກະສານລາຍງານການເງິນທີ່ບທວນຄືນ.

4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ເງິນສົດໃນມື	13,590,000	15,041,000
ເງິນສົດໃນທະນາຄານ	9,951,825,176	4,797,147,424
	9,965,415,176	**4,812,188,424**

5 ໜີ້ຕ້ອງຮັບທາງການຄ້າ-ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	12,025,102,431	5,770,070,800
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນອື່ນ	21,382,064,779	25,005,775,640
	33,407,167,210	**30,775,846,440**
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(6,568,106,882)	(6,599,535,882)
ໜີ້ຕ້ອງຮັບທາງການຄ້າ - ສຸດທິ	**26,776,202,328**	**24,176,310,558**

ໃນລະຫວ່າງໄລຍະ, ຜູ້ບໍລິຫານໄດ້ມີການອະນຸມັດການປ່ຽນແປງນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດ ຫຼື ຜູ້ໃຫ້ບໍລິການໃນໂຄງການຂອງລັດຖະບານ. ການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບສຳລັບບໍລິສັດ ຫຼື ຜູ້ໃຫ້ບໍລິການດັ່ງກ່າວ ຈະຖືກຕັ້ງໄວ້ 5% ຕໍ່ປີສຳລັບຍອດຄ້າງຈ່າຍທີ່ເກີນ 2 ປີຂຶ້ນໄປ.

ການປ່ຽນແປງນະໂຍບາຍການບັນຊີດັ່ງກ່າວແມ່ນເລີ່ມປະຕິບັດຕັ້ງແຕ່ຫົກເດືອນຕົ້ນປີເປັນຕົ້ນໄປ.

6 ສິນຄ້າໃນສາງ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ເຄື່ອງໃຊ້ຫ້ອງການ	596,353,472	607,391,946
ບັດເຕີມນ້ຳມັນ Plus card	168,517,228	193,588,586
	764,870,700	**800,980,532**
ຫັກ: ສຳຮອງຄ່າເສື່ອມມູນຄ່າຕາມມູນຄ່າສຸດທິ	-	-
ສິນຄ້າໃນສາງ, ສຸດທິ	**764,870,700**	**800,980,532**

7 ຊັບສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	114,621,206,962	98,317,939,886
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	1,712,246,011	1,643,284,876
ຈ່າຍລ່ວງໜ້າ	1,259,358,763	7,992,163,622
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	4,159,341,116	3,897,730,909
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	90,000,000	65,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,146,854,492
ໜີ້ຕ້ອງຮັບ ດອກເບ້ຍ (ບົດອະທິບາຍຂໍ້ 21.3)	19,427,294,691	18,628,719,284
ໜີ້ຕ້ອງຮັບຈາກການປະກອບທຶນ (ບົດອະທິບາຍຂໍ້ 21.3)	36,368,330,104	36,368,330,104
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	366,610,281,327	323,867,128,318
	543,394,913,466	**491,927,151,491**

8 ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2024 - ກວດສອບ	371,951,926,724
ເພີ່ມຂຶ້ນ	456,967,208
ຫັກ: ຄ່າຫຼ້ຍຫ້ຽນ	(695,773,139)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ	**371,713,120,793**

9 ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2024 - ກວດສອບ	2,083,635,172
ເພີ່ມຂຶ້ນ	203,866,505
ຫັກ: ຄ່າເສື່ອມມູນຄ່າ	(540,868,984)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ	**1,746,632,693**

10 ຊັບສິນບັດຄົງທີ່ເພື່ອການລົງທຶນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2024 - ກວດສອບ	199,477,136,681
ຫັກ: ຄ່າຫຼ້ຍຫ້ຽນ	(365,483,674)
ມູນຄ່າຍັງເຫລືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ	**199,111,653,007**

11. ການລົງທຶນໃນບໍລິສັດໃນເຄືອ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ວັນທີ 1 ມັງກອນ	**198,000,000,000**	**198,000,000,000**
ເພີ່ມຂຶ້ນ	-	-
	198,000,000,000	**198,000,000,000**

ມູນຄ່າທີ່ຮັບຮູ້ໃນໃບລາຍງານຖານະການເງິນມີດັ່ງລຸ່ມນີ້:

ຊື່ວິສະຫະກິດ	ດຳເນີນງານໃນ ປະເທດ	ກິດຈະກຳຂອງທຸລະກິດ	ສ່ວນເປັນເຈົ້າ ຂອງຖືໂດຍ ບໍລິສັດ		ສ່ວນເປັນເຈົ້າ ຂອງຖືໂດຍ ຜູ້ຖື ຮຸ້ນສ່ວນນ້ອຍ		ການລົງທຶນໃນວິທີຕົ້ນທຶນ	
			2024 (%)	2023 (%)	2024 (%)	2023 (%)	2024 ກີບ	2023 ກີບ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ສ.ປ.ປ ລາວ	ນຳເຂົ້າ ແລະ ສົ່ງອອກ	99%	99%	1%	1%	148,500,000,000	148,500,000,000
ບໍລິສັດ ປິໂຕຣເທຣດ ດິສທະ ບິວຊັ້ນ ຈຳກັດ	ສ.ປ.ປ ລາວ	ຂາຍຍ່ອຍ ແລະ ຂາຍສົ່ງ	99%	99%	1%	1%	49,500,000,000	49,500,000,000

12. ຊັບສິນບໍ່ໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ລາຍຈ່າຍລ່ວງໜ້າ*	44,579,978,123	39,166,780,757
ເງິນຈ່າຍລ່ວງໜ້າໃຫ້ປ້ຳນ້ຳມັນ ແລະ ອື່ນໆ	6,067,238,000	6,137,238,000
	50,647,216,123	**45,304,018,757**

*ສ່ວນໃຫຍ່ແມ່ນປະກອບມີ ເງິນຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ 34,419,839,505 ກີບ (2023: 34,419,839,505 ກີບ) (ບົດອະທິບາຍຂໍ້ 21.3) ແລະ ລາຍຈ່າຍລ່ວງໜ້າອື່ນໆ.

13. ໜີ້ຕ້ອງສົ່ງທາງການຄ້າ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	8,824,492,744	5,444,905,589
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນກ່ຽວຂ້ອງ (ບົດອະທິບາຍຂໍ້ 21.3)	1,439,243,536	1,325,322,133
	10,263,736,280	**6,770,227,722**

14. ໜີ້ຕ້ອງສົ່ງອາກອນ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2022 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	813,301,259	3,356,864,701
ໜີ້ຕ້ອງສົ່ງອາກອນລາຍໄດ້ສ່ວນບຸກຄົນ *	107,754,822	77,812,841
ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ **	-	3,590,426,319
	921,056,081	**7,025,103,861**

* ໃນລະຫວ່າງໄລຍະ, ບໍລິສັດໄດ້ມີການຈ່າຍຍອດຄ້າງຊຳລະອາກອນມູນຄ່າເພີ່ມຈຳນວນ 2.5 ຕື້ກີບ.

** ສ່ວນໃຫຍ່ແມ່ນ ຍອດຄ້າງຊຳລະຂອງໜີ້ຕ້ອງສົ່ງອາກອນ ແມ່ນອີງຕາມການປະເມີນຂອງເຈົ້າໜ້າທີ່ສ່ວຍອາກອນ ລົງວັນທີ 27 ທັນວາ 2019.

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກບົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 - 2017 ຈຳນວນເງິນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນບົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍຄ່າປັບໄໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຈຳເປັນໄດ້ຂໍຄຳເຫັນຈາກກະຊວງການເງິນ.

14. ໜີ້ຕ້ອງສົ່ງອາກອນ (ຕໍ່)

ຜູ້ບໍລິຫານໄດ້ ບັນທຶກລາຍຈ່າຍຄ່າອາກອນຈຳນວນ 20,835,576,105 ກີບ ໃນໃບລາຍງານການເງິນສຳລັບສິ້ນສຸດປີ ໃນວັນທີ 31 ທັນວາ 2019, ແລະ ບໍ່ມີຍອດຄົງຄ້າງໜີ້ຕ້ອງສົ່ງ ໃນວັນທີ 30 ມິຖຸນາ 2024 (2023: 3.5 ຕື້ກີບ). ໃນລະຫວ່າງໄລຍະ ບໍລິສັດ ໄດ້ຊຳລະໜີ້ຕ້ອງສົ່ງດັ່ງກ່າວຈຳນວນ 3.5 ຕື້ກີບ.

ກ່ຽວກັບພັນທະໜີ້ຕ້ອງສົ່ງຄ່າປັບໃໝ ແຕ່ປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ, ບໍລິສັດ ໄດ້ຮັບປົດບັນທຶກຈາກ ກົມສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໃໝ ຂອງ ປີ 2014 ຫາ 2017 ຈຳນວນ 964,759,679 ກີບ ໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 30 ມິຖຸນາ 2024 ບໍລິສັດ ມີພັນທະໜີ້ຄ່າປັບໃໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນ ສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2023: 6,452,725,282 ກີບ).

ໃນຂະນະດຽວກັນ, ຜູ້ບໍລິຫານ ພວມດຳເນີນການຂໍການຍົກເວັ້ນພັນທະດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນ ທີ່ຈະຖືກປັບໃໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງສົ່ງ ຄ່າປັບໃໝ ຈຳນວນ 6,452,725,282 ກີບ (2023: 6,452,725,282 ກີບ) ເຂົ້າໃນເອກະສານລາຍງານການເງິນ.ໃນວັນທີລາຍງານການເງິນ ແມ່ນຢູ່ໃນຂັ້ນຕອນການກວດກາ ໂດຍ ເຈົ້າໜ້າທີ່ສ່ວຍສາອາກອນ.

15. ເງິນກູ້ຢືມ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໝຸນວຽນ		
ເງິນກູ້ຢືມໄລຍະຍາວສ່ວນໝຸນວຽນຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	141,226,055,400	88,749,486,800
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	215,864,621,004	205,050,428,208
	357,090,676,404	**293,799,915,008**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21.4)	489,357,276,316	514,855,649,756
	489,357,276,316	**514,855,649,756**
	846,447,952,720	**808,655,564,764**

ການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ວັນທີ 1 ມັງກອນ	808,655,564,764	775,726,487,214
ເງິນກູ້ຢືມໄດ້ຮັບພາຍໃນໄລຍະ	-	663,206,782,957
ເງິນກູ້ຢືມໄດ້ຊຳລະຄືນພາຍໃນໄລຍະ	-	(794,034,232,000)
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	37,792,387,956	163,756,526,593
	846,447,952,720	**808,655,564,764**

15. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ຫຼັກຊັບຄ້ຳປະກັນ	ຍອດເຫຼືອໃນວັນທີ 30 ມິຖຸນາ 2024
ບໍລິສັດ ບ໊ວລະພາ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	29 ທັນວາ 2019 ເປັນຕົ້ນໄປ	4,398,535 ໂດລາ	0%	ບໍ່ມີ	4,398,535 ໂດລາ (ທຽບເທົ່າ 97,383,564,900 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	11 ເມສາ 2023 ເປັນຕົ້ນໄປ	66,697,256,733 ກີບ	10%	ບໍ່ມີ	54,276,256,733 ກີບ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	25 ທັນວາ 2021 ເປັນຕົ້ນໄປ	1,302,300 ໂດລາ 51,51,000 ບາດ	10%	ບໍ່ມີ	1,302,300 ໂດລາ 51,951,000 ບາດ (ທຽບເທົ່າ 64,204,799,370 ກີບ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	25 ທັນວາ 2023 – 25 ທັນວາ 2028	160,315,954,896 ກີບ	0%	ບໍ່ມີ	160,315,954,896 ກີບ
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະ 4 ງວດຕໍ່ປີ ຕາມ "ຕາຕະລາງຊຳລະເງິນກູ້" ດອກເບ້ຍ: ຊຳລະທຸກເດືອນ	25 ທັນວາ 2023 – 25 ທັນວາ 2028	691,400,000 ບາດ	9%	- ດິນ ແລະ ອາຄານ 11 ແຫ່ງ - ສັນຍາສະໜອງນ້ຳມັນແກ່ບໍລິສັດ ພຸເປ໋ຍ ຈຳກັດ, ບໍລິສັດ ຢຸນບານ ການກໍ່ສ້າງ ແລະ ການລົງທຶນ (ລາວ) ຈຳກັດຜູ້ດຽວ - ດິນ ແລະ ປ້ຳນ້ຳມັນ 7 ແຫ່ງ ຂອງບໍລິສັດ ດີສທິບິວຊັນ ຈຳກັດ - ດິນ ແລະ ປ້ຳນ້ຳມັນ 9 ແຫ່ງ ຂອງບໍລິສັດປິໂຕລັ້ງມ ເທດດິ້ງ ລາວ ມະຫາຊົນ	690,686,600 ບາດ (ທຽບເທົ່າ 470,267,376,820 ກີບ)
					ລວມ	**5,700,835 ໂດລາ** **742,637,600 ບາດ** **214,592,211,629 ກີບ** **(ທຽບເທົ່າ 846,447,952,720 ກີບ)**

15. ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍທີ່ກ່ຽວຂ້ອງກັບເງິນກູ້ຢືມຂອງບໍລິສັດມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງທີ່	846,447,952,720	808,655,564,764
ເງິນກູ້ຢືມທັງໝົດ	**846,447,952,720**	**808,655,564,764**

ການກຳນົດການໄລຍະຂອງເງິນກູ້ຢືມຈາກທະນາຄານມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໄລຍະລະຫວ່າງ 1 ປີ ຫາ 2 ປີ	215,864,621,003	205,050,428,208
ໄລຍະລະຫວ່າງ 2 ປີ ຫາ 5 ປີ	630,583,331,717	603,605,136,556
	846,447,952,720	**808,655,564,764**

16. ໜີ້ສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ເງິນຮັບລ່ວງໜ້າຈາກລູກຄ້າ	13,181,962,003	10,940,649,799
ໜີ້ຕ້ອງສົ່ງອື່ນໆ	8,855,305,199	8,798,805,215
ໜີ້ຕ້ອງສົ່ງອື່ນໆ - ຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 21.3)	203,672,446,615	153,268,523,451
ກຳໄລລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	81,301,421,816	71,642,374,152
	307,011,135,633	**244,650,352,617**

17. ທຶນຈົດທະບຽນ

ຮຸ້ນຂອງບໍລິສັດ (ພາຍໃຕ້ສັນຍາລັກ "PTL") ແມ່ນໄດ້ລົງທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການນັບຕັ້ງແຕ່ວັນທີ 10 ທັນວາ 2014 ຕາມໃບອະນຸຍາດສະບັບເລກທີ 005 ລົງວັນທີ 26 ພະຈິກ 2014. ຮຸ້ນທັງໝົດໃນວັນທີ 30 ມິຖຸນາ 2024 ມີຈຳນວນ 235,000,000 ຮຸ້ນ ເຊິ່ງມີມູນຄ່າຮຸ້ນລະ 2,000 ກີບ.

ໃນໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ແມ່ນບໍ່ໄດ້ມີການຫຼຸດ ຫຼື ອອກຮຸ້ນເພີ່ມ.

18. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດໃຫ້ ບໍລິສັດ ຕັ້ງຄັງສະສົມຕາມ ລະບຽບການ ຢ່າງຕ່ຳ 10% ຂອງກຳໄລສຸດທິໃນປີ ຈົນຄັງສະສົມຕາມລະບຽບການຄົບ 50% ຂອງມູນຄ່າທຶນຈົດທະບຽນ.

ໃນລະຫວ່າງໄລຍະແມ່ນບໍ່ມີການປ່ຽນແປງ, ໃນວັນທີ 30 ມິຖຸນາ 2024 ຄັງສະສົມດັ່ງກ່າວແມ່ນ ຈຳນວນ 3,708,530,711 ກີບ (2023: 3,708,530,711 ກີບ).

19. ອາກອນລາຍໄດ້

ອີງຕາມກົດໝາຍສ່ວຍສາອາກອນ ເລກທີ 259 ທີ່ມີຜົນບັງຄັບໃຊ້ໃນ ວັນທີ 1 ມັງກອນ 2020. ບໍລິສັດໄດ້ຄຳນວນອາກອນກຳໄລ ໂດຍອີງຕາມກຳໄລສຸດທິ ໃນອັດຕາ 20% (2023: 20%) ພາຍຫຼັງທີ່ໄດ້ພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ອະນຸຍາດ ເຊິ່ງໄດ້ ລະບຸໃນກົດໝາຍວ່າດ້ວຍອາກອນລາຍໄດ້.

ໃນ ສປປ ລາວ, ການສົ່ງຄືນອາກອນກຳໄລແມ່ນຈະໄດ້ຮັບການທົບທວນຢ່າງລະອຽດ ໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ນອກຈາກນີ້, ບັນຫາອາກອນທີ່ເພີ່ມຂຶ້ນໃນການກວດສອບອາດຕ້ອງໃຊ້ການຕັດສິນ ແລະ ພິຈາລະນາຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນຄືນສາມາດສົ່ງຜົນຕໍ່ການຊຳລະອາກອນເພີ່ມເຕີມ ຫຼື ອາດຈຳເປັນຕໍ່ການສົ່ງເງິນຄືນທີ່ສຳຄັນ. ເຊິ່ງຈະສົ່ງຜົນເຮັດ ໃຫ້ການຊຳລະເງິນ ຫຼື ສົ່ງຄືນເງິນ ຖືກບັນທຶກເປັນ ດັດປັບອາກອນກຳໄລໃນປີທີ່ສຳເລັດການທົບທວນຄືນ.

20. ຂາດທຶນ ພື້ນຖານຕໍ່ຮຸ້ນ

ພື້ນຖານການຄິດໄລ່ຂາດທຶນ ຕໍ່ຮຸ້ນ ຄິດໄລ່ຈາກການແບ່ງຂາດທຶນສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ ອອກພາຍໃນໄລຍະ.

	ທົບທວນຄືນ 30 ມິຖຸນາ 2024 ກີບ	ທົບທວນຄືນ 30 ມິຖຸນາ 2023 ກີບ
ຂາດທຶນສຸດທິ ຂອງຮຸ້ນສາມັນ (ກີບ)	(23,768,173,172)	(17,133,745,492)
ຄ່າສະເລ່ຍຂອງຈຳນວນຮຸ້ນສາມັນ (ຮຸ້ນ)	235,000,000	235,000,000
ຂາດທຶນພື້ນຖານຕໍ່ຮຸ້ນ (ກີບ)	(101)	(73)

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນທີ່ມີຄວາມສຳພັນກັບບໍລິສັດໂດຍກົງ ຫຼື ອ້ອມ. ໂດຍທີ່ບໍລິສັດນັ້ນມີອຳນາດໃນການຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມດຽວກັນກັບ ກຸ່ມບໍລິສັດ ລວມເຖິງບໍລິສັດທີ່ດຳເນີນການລົງທຶນ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ ແມ່ນລວມມີ ວິສາຫະກິດຮຸ່ນສ່ວນ ແລະ ບຸກຄົນທີ່ເປັນເຈົ້າຂອງເອງ, ທາງກົງ ຫຼື ທາງອ້ອມ, ເຊິ່ງການລົງຄະແນນສຽງໃນບໍລິສັດ ແມ່ນມີອຳນາດຕໍ່ບໍລິສັດ ຢ່າງເປັນສາລະສຳຄັນຕໍ່ກິດຈະການ, ຜູ້ບໍລິຫານຫຼັກ ລວມເຖິງຜູ້ອຳນວຍການ ແລະ ເຈົ້າໜ້າທີ່ຂອງບໍລິສັດ ແລະ ສະມາຊິກໃນຄອບຄົວໃກ້ຊິດ. ໃນການພິຈາລະນາ ສາຍສຳພັນພາກສ່ວນທີ່ກ່ຽວຂ້ອງລະຫວ່າງບຸກຄົນ ລວມເຖິງພາກສ່ວນທີ່ກ່ຽວຂ້ອງກັນ.

ໃນການພິຈາລະນາຄວາມເປັນໄປໄດ້ ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງບໍ່ໄດ້ ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການຕໍ່ໄປນີ້ແມ່ນລາຍການສາລະສຳຄັນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງ:

21.1 ຂາຍສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ຂາຍບໍລິການໃຫ້ແກ່:		
ບໍລິສັດໃນເຄືອ		
ລາຍຮັບດອກເບ້ຍ	-	4,400,155,490
ຄ່າທຳນຽມບໍລິຫານ	12,184,174,461	13,235,921,023
ຄ່າບໍລິການ ໄອທີ	-	6,403,962,617
ຄ່າເຊົ່າ	878,715,180	1,900,194,393
	13,062,889,641	**25,940,233,523**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຮັບດອກເບ້ຍ	778,697,374	775,572,639
ຄ່າເຊົ່າ	4,105,391,662	1,866,961,827
ຄ່າບໍລິການ ໄອທີ ແລະອື່ນໆ	-	3,358,864,035
	4,884,089,036	**6,001,398,501**

21.2 ການຊື້ສິນຄ້າ ແລະ ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ທີ່ບທວນຄືນ 30 ມິຖຸນາ 2023 ກີບ
ຊື້ບໍລິການຈາກ:		
ບໍລິສັດໃນເຄືອ		
ລາຍຈ່າຍດອກເບ້ຍ	5,733,676,689	3,362,587,583
	5,733,676,689	**3,362,587,583**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ຄ່າທຳນຽມບໍລິຫານ	1,804,166,778	218,187,000
ລາຍຈ່າຍດອກເບ້ຍ	22,647,689,344	29,963,768,319
	24,451,856,122	**30,181,955,319**

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບທາງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 5)	12,025,102,431	5,770,070,800
	12,025,102,431	**5,770,070,800**
ຊັບສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບຈາກການປະກອບທຶນ	36,368,330,104	36,368,330,104
ໜີ້ຕ້ອງຮັບອື່ນໆ	15,625,131,279	5,348,540,860
	51,993,461,383	**41,716,870,964**
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເພີ່ມມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍຍານພາຫະນະ	16,149,973,862	16,149,973,862
ໜີ້ຕ້ອງຮັບ ດອກເບ້ຍ	35,979,538	24,073,582
	38,683,635,740	**38,671,729,784**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 7)		
ໜີ້ຕ້ອງຮັບ ດອກເບ້ຍ	19,391,315,153	18,604,645,702
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	37,089,087,007	35,352,955,706
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	23,259,332,474	18,968,787,118
	79,739,734,634	**72,926,388,526**
	170,416,831,757	**153,314,989,274**
ຊັບສິນບໍ່ໝຸນວຽນອື່ນໆ		
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 12)		
ເງິນລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**
ລວມໜີ້ຕ້ອງຮັບ	**216,861,773,693**	**193,504,899,579**

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ສິນຄ້າ/ບໍລິການ (ຕໍ່)

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໜີ້ຕ້ອງສົ່ງໃຫ້ແກ່:		
ໜີ້ຕ້ອງສົ່ງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 13)	1,439,243,536	1,325,322,133
	1,439,243,536	**1,325,322,133**
ໜີ້ສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ (ບົດອະທິບາຍຂໍ້ 16)		
ໜີ້ຕ້ອງສົ່ງຈາກການປະກອບທຶນ	56,306,694,922	56,306,694,922
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	19,572,489,502	13,265,445,143
ອື່ນໆ	110,357,527,996	82,056,583,804
	186,236,712,420	**151,628,723,869**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 16)		
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	16,351,326,162	617,961,630
ອື່ນໆ	1,084,408,033	1,021,837,952
	17,435,734,195	**1,639,799,582**
ໜີ້ຕ້ອງສົ່ງທັງໝົດ	**205,111,690,151**	**154,593,845,584**

21.4 ເງິນກູ້ຍືມຈາກພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໃນວັນທີ 1 ມັງກອນ	808,655,564,764	709,402,487,214
ເງິນກູ້ຍືມທີ່ໄດ້ຮັບລະຫວ່າງໄລຍະ	-	663,206,782,957
ເງິນກູ້ຍືມທີ່ໄດ້ຈ່າຍຊຳລະຄືນລະຫວ່າງໄລຍະ	-	(727,710,232,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	37,792,387,956	163,756,526,593
	846,447,952,720	**808,655,564,764**

ເງິນກູ້ຍືມຈາກພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ຖືກລະບຸໄລຍະການຈ່າຍຄືນ ແລະ ອັດຕາດອກເບ້ຍ ສະເລ່ຍທີ່ 0%, 9-10% ຕໍ່ປີ (2023: 0%, 9-10% ຕໍ່ປີ) (ບົດອະທິບາຍຂໍ້ 15).

21. ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ໃນວັນທີ 1 ມັງກອນ	145,733,311,964	139,898,947,042
ເງິນໃຫ້ກູ້ຢືມທີ່ໄດ້ຮັບຊຳລະຄືນພາຍໃນໄລຍະ	-	(12,421,000,000)
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	8,187,782,631	18,255,364,922
	153,921,094,595	**145,733,311,964**

ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງມີການກຳນົດໄລຍະເວລາໃນການຊຳລະຄືນ ແລະ ອັດຕາດອກເບ້ຍທີ່ກຳນົດໄວ້ແມ່ນ 0%,6.5%-11% (2023: 0%,6.5-11%) ຕໍ່ປີ.

21.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ລ້ານກີບ	ທີ່ບທວນຄືນ 30 ມິຖຸນາ 2023 ລ້ານກີບ
ເງິນເດືອນ ແລະ ອື່ນໆ	1,990	1,934

22. ພາລະຜູກພັນ

ກ. ພາລະຜູກພັນສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້.

ຈຳນວນເງິນທີ່ຕ້ອງຊຳລະໃນອະນາຄົດພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2024 ກີບ	ກວດສອບ 31 ທັນວາ 2023 ກີບ
ຕ່ຳກວ່າ 1 ປີ	2,887,605,035	3,731,845,750
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	4,123,346,965	8,619,152,029
ເກີນ 5 ປີ	-	3,035,320,807
	7,010,952,000	**15,386,318,586**

23. ເຫດການທີ່ເກີດຂຶ້ນຫຼັງວັນທີ່ບົດລາຍງານ

ບໍ່ມີເຫດການສາລະສຳຄັນ ເກີດຂຶ້ນຫລັງຈາກວັນທີ່ເອກະສານລາຍງານການເງິນທີ່ບທວນຄືນ ທີ່ມີຜົນກະທົບຕໍ່ຕົວເລກໃນຂໍ້ມູນການເງິນຂອງບໍລິສັດ.